# ທະນາຄານແຫ່ງ ສປປ ລາວສາຂາພາກເໜືອ ແຂວງຫຼວງພະບາງ ເຜີຍແຜ່ການຄຸ້ມຄອງພັນທະບັດໃນຂອດຈໍລະຈອນ (ພັນທະບັດສະບັບປັບປຸງໃໝ່)




ວັນທີ 21 ຕຸລາ 2022 ນີ້ຢູ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໄດ້ເຜີຍແຜ່ການຄຸ້ມຄອງພັນທະບັດໃນຂອດຈໍລະຈອນ (ພັນທະບັດສະບັບປັບປຸງໃໝ່) ໃຫ້ແກ່ທະນາຄານທຸລະກິດທຸກໆທະນາຄານ ໃນແຂວງຫຼວງພະບາງຢ່າງທົ່ວເຖິງ,ການນໍາໃຊ້ປະເພດພັນທະບັດໃບ 10.000 ພັນ ແລະໃບ 20.000 ພັນກີບ. ໃນຮູບແບບປັບປຸງໃໝ່ລຸ້ນປີ 2020 ເພື່ອເປັນການຄຸ້ມຄອງຫຼັກສະນະປ້ອງກັນການປອມແປງ.ໃນພັນທະບັດຈະປະກອບມີດັ່ງນີ້

1. ເຄື່ອງໝາຍຊາດຂອງ ສປປລາວ ຈະເຮືອງແສງເປັນສີເຫຼືອງ ເມື່ອສ່ອງຜ່ານແສງໄຟຟ້າສີມ່ວງ.

2. ຕົວໜັງສື ສາທາ ລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເມື່ອສຳພັດສະດຸດມື.

3. ຮູບປະທານໄກສອນພົມວິຫານ. ເມື່ອສຳພັດສະດຸດມື

4. ລາຍປະທານໄກສອນຢູ່ໃນເນື້ອເຈ້ຍ ເມື່ອສອງແສງສະຫ່ວາງຈະເຫັນຢ່າງສັດເຈນທັງດ້ານໜ້າແລະດ້ານຫຼັງ

5. ລາຍນ້ຳຕົວເລກມູນຄ່າ 10.000 ແລະ 20.000 ຢູ່ໃນເຈ້ຍ ເມື່ອສອງແສງສະຫ່ວາງຈະເຫັນຢ່າງສັດເຈນ.ທັງດ້ານໜ້າ ແລະດ້ານຫຼັງ

6. ເສັ້ນນິລະໄພ ມີຕົວເລກ ໑໐໐໐໐ - ໒໐໐໐໐ ສາມາດເຫັນດ້ວຍຕາເປົ່າ

7. ຕົວເລກມູນຄ່າ 10.000-20.000 ເມື່ອພິກອຽງຈະປ່ຽນສີ

8. ເລກລຳດັບ ຈະເຮືອງແສງເປັນສີສົ້ມ ເມື່ອສອງຜ່ານແສງໄຟສີມ້ວງ

9. ສັນຍາລັກສະເພາະສຳລັບຄົນພິການທາງສາຍຕາ ເມື່ອສຳພັດຈະສະດຸດມື

10. ຕົວເລກມູນຄ່າ ໑໐໐໐໐ - ໒໐໐໐໐ ເມື່ອສາພັດຈະສະດຸດມື

11. ຕົວເລກມູນຄ່າ ຕົວເລກ 20.0000 ຈະເຮືອງແສງເປັນສີສົ້ມອ່ອນ ເມື່ອສ່ອງຜ່ານແສງໄຟສີມ້ວງ

12. ລາຍລາວ ຈະເຮືອງແສງເປັນສີເຫຼືອງ ເມື່ອສອງຜ່ານແສງໄຟສີມ້ວງ

13. ຕົວເລກມູນຄ່າ ໒໐໐໐໐ ກີບ ບໍ່ສາມາດເບິ່ງເຫັນຕາເປົ່າ, ຈະເຮືອງແສງເປັນສີເຫຼືອງ ເມື່ອສອງຜ່ານແສງໄຟສີມ້ວງ.

ການເຜີຍແຜ່ການຄຸ້ມຄອງຄັນທະບັດໃນຂອດຈໍລະຈອນຄັ້ງນີ້ໂດຍກ່າວເປີດແມ່ນ ທ່ານ ສັງທອງ ຮອງຫົວໜ້າ ທະນາຄານສປປລາວ ສາຂາພາກເໜືອແຂວງຫຼວງພະບາ, ຜູ້ເຜີຍແຜ່ແມ່ນ ທ່ານ ນາງໂພຄຳຮອງຫົວໜ້າກົມພິມຈຳໜ່າຍ ທະນາຄານແຫ່ງສປປລາວ.

**ຂ່າວ: ສຸດທິສັກ ຫວັງສະຫວັດ**






ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ